ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ: 0754/ກປຝ.

ນະຄອນຫຼວງວຽງຈັນ, ວັນທີ 30 APR 2015

# ແຈ້ງການ

**ຮຽນ:** ຫົວໜ້າຂະແໜງປູກຝັງ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ

**ເລື່ອງ:** ການວິໄຈຄວາມສ່ຽງສັດຕູພືດ ສຳລັບ ພືດ ແລະ ຜະລິດຕະພັນພືດ ກ່ອນການນຳເຂົ້າໄປຍັງ ສສ ຫວຽດນາມ.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10/05/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງໃສ່ຄຳສັ່ງລັດຖະມົນຕີກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະ ກວດກາສຸຂານາໄມພືດ ທີ່ຈະສົ່ງອອກໃຫ້ສອດຄ່ອງກັບລະບຽບການດ້ານສຸຂານາໄມພືດຂອງປະເທດປາຍທາງສະບັບເລກທີ 2136/ກປ , ລົງວັນທີ 26 ຕຸລາ 2011
- ແຈ້ງການເລກທີ 30/2014/TT-BNNPTNT, ລົງວັນທີ 05/09/2014, ກະຊວງກະສິກຳ ແລະ ພັດທະນາ ຊົນນະບົດ ສສ ຫວຽດນາມ.

ກົມປູກຝັງ ຂໍຖືເປັນກຽດແຈ້ງມາຍັງ ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງທົ່ວປະເທດ ຊາບວ່າ ໃນປັດຈຸບັນການຄ້າພືດ ແລະ ຜະລິດຕະພັນພືດ ລະຫວ່າງ ສປປ ລາວ ກັບ ສສ ຫວຽດນາມ ໄດ້ຫັນໄປສູ່ ຕາມຫຼັກການຂອງອົງການການຄ້າໂລກ ໂດຍສະເພາະແມ່ນການນຳໃຊ້ມາດຕະການສຸຂານາໄມພືດໃນການຄຸ້ມຄອງສິນຄ້າກະສິກຳລະຫວ່າງປະເທດ ເປັນຕົ້ນແມ່ນການວິໄຈຄວາມສ່ຽງສັດຕູພືດ ກ່ອນການອອກອະນຸຍາດໃຫ້ນຳເຂົ້າພືດ ແລະ ຜະລິດຕະພັນພືດ ໄປຍັງ ສສ ຫວຽດນາມ. ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ບັນດາປະເທດ ສົ່ງອອກ ຕ້ອງນຳສົ່ງຂໍ້ມູນມາດຕະການສຸຂານາໄມພືດຕົວຈິງ ທຸກໆຂັ້ນຕອນເລີ່ມແຕ່ຂອດປູກໄປຈົນເຖິງສົ່ງອອກ ບົນພື້ນຖານປະຕິບັດຕາມແຈ້ງການເລກທີ 30/2014/TT-BNNPTNT ຊຶ່ງຈະເລີ່ມມີຜົນບັງຄັບໃຊ້ນັບແຕ່ວັນທີ 31/07/2015 ເປັນຕົ້ນໄປ.

ເພື່ອອຳນວຍຄວາມສະດວກໃຫ້ແກ່ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຂອງ ສປປ ລາວ ໄປຍັງ ສສ ຫວຽດນາມໃຫ້ມີຄວາມສອດຄ່ອງຕາມ ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດຂອງ ສສ ຫວຽດນາມ.

**ຫົວໜ້າກົມປູກຝັງ ອອກແຈ້ງການ:**

1. ປະເພດພືດ ແລະ ຜະລິດຕະພັນພືດ ທີ່ຕ້ອງຜ່ານການວິໄຈຄວາມສ່ຽງສັດຕູພືດກ່ອນຈຶ່ງອະນຸຍາດໃຫ້ນຳເຂົ້າ ສສ ຫວຽດນາມ ປະກອບມີ ດັ່ງລຸ່ມນີ້:
   - ຕົ້ນພືດ ແລະ ສິ້ນສ່ວນຕ່າງໆ ຂອງພືດ ທີ່ຍັງມີຊີວິດ ລວມທັງເມັດພັນ ແລະ ເຊື້ອພັນ, ໝາກໄມ້ສົດ, ຮາກພືດ, ຫຍ້າ ແລະ ເມັດຫຍ້າ;
   - ແມງໄມ້ ແລະ ເຊື້ອຈຸລິນຊີ ທີ່ເປັນປະໂຫຍດ ສຳລັບ ນຳໃຊ້ໃນວຽກງານປ້ອງກັນພືດ;

- ພືດ ແລະ ວັດຖຸຄວບຄຸມທາງດ້ານກັກກັນພືດອື່ນໆ ທີ່ມີຄວາມສ່ຽງສູງສາມາດນໍາພາສັດຕູພືດຄວບຄຸມ ຂອງ ຫວຽດນາມ ຊຶ່ງຖືກປະກາດຕາມແຈ້ງການຂອງກະຊວງກະສິກໍາ ແລະ ພັດທະນາຊົນນະບົດ ສສ ຫວຽດນາມ ໃນແຕ່ລະໄລຍະ;

ໝາຍເຫດ: ພືດທີ່ໄດ້ຮັບການຍົກເວັ້ນໃນການວິໄຈຄວາມສ່ຽງສັດຕູພືດປະກອບມີ:ເມັດພັນເຂົ້າ, ເມັດພັນຜັກກາດ, ເມັດພັນສາລີ,ເມັດພັນຜັກສະຫຼັດ,ແນວພັນພືດທີ່ນໍາໃຊ້ໃນການຄົ້ນຄວ້າທົດລອງ, ແມງໄມ້, ເຊື້ອຈຸລິນຊີ ແລະ ສິ່ງທີ່ມີຊີວິດຕ່າງໆ ນໍາໃຊ້ໃນວຽກງານປ້ອງກັນພືດ ຊຶ່ງໄດ້ຮັບການອະນຸຍາດສະເພາະຈາກກົມປ້ອງກັນພືດ, ສສ ຫວຽດນາມ.

2. ຂະແໜງປູກຝັງ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ຕ້ອງຮີບຮ້ອນແຈ້ງໃຫ້ຜູ້ສົ່ງອອກ ແລະ ພາກສ່ວນທີ່ ກ່ຽວຂ້ອງຊາບຢ່າງທົ່ວເຖິງ ເພື່ອສັງລວມບັນຊີລາຍຊື່ ຜູ້ທີ່ມີຈຸດປະສົງສົ່ງອອກພືດ ແລະ ຜະລິດຕະພັນພືດ ໄປຍັງ ສສ ຫວຽດນາມ ເປັນຕົ້ນແມ່ນ ເຂົ້າສານ, ເຂົ້າເປືອກ, ສາລີ, ມັນຕົ້ນແຫ້ງ, ຖົ່ວດິນ, ຂີງ, ຜະລິດຕະພັນໄມ້, ໝາກກ້ວຍ, ກາເຟ, ຢາງພາລາ ແລະ ພືດອື່ນໆໃຫ້ຮີບຮ້ອນນໍາສົ່ງຂໍ້ມູນການສົ່ງອອກທັງໝົດດັ່ງກ່າວໃຫ້ກົມປູກຝັງຕາມຮ່າງເອກະສານຊ້ອນທ້າຍ 1 ກ່ອນວັນທີ 30 ເດືອນ ພຶດສະພາ ປີ 2015.
3. ຜູ້ສົ່ງອອກພືດ ທີ່ນອນຢູ່ໃນບັນຊີ ຕາມຂໍ້ທີ 2 ຂອງແຈ້ງການສະບັບນີ້ ຕ້ອງຮີບຮ້ອນສົມທົບກັບຜູ້ຜະລິດຂອງຕົນ ແລະ ບັນດາຫົວໜ່ວຍທຸລະກິດ ທີ່ຕິດພັນກັບຕ້ອງໂສ້ການຜະລິດ ເປັນຕົ້ນແມ່ນ ຜູ້ເກັບຊື້, ໂຮງງານປຸງແຕ່ງ ແລະ ຫຸ້ມຫໍ່ ເພື່ອສະໜອງຂໍ້ມູນກ່ຽວກັບມາດຕະການຈັດການຄວາມສ່ຽງສັດຕູພືດສົ່ງອອກໂດຍຜ່ານຂະແໜງປູກຝັງແຂວງນໍາສົ່ງໃຫ້ກົມປູກຝັງ ຕາມແບບຮ່າງເອກະສານຊ້ອນທ້າຍ 3 ກ່ອນວັນທີ 30 ຕຸລາ 2015 ແລະໃຫ້ຄວາມຮ່ວມມືອໍານວຍຄວາມສະດວກໃຫ້ແກ່ ວິຊາການ ຂອງກົມປູກຝັງ ລົງກວດກາສະພາບການຜະລິດ ແລະ ການຈັດການສັດຕູພືດຕົວຈິງຢູ່ສະຖານທີ່ການຜະລິດ ຕາມຂໍ້ມູນທີ່ນໍາສົ່ງໃຫ້ນັ້ນ.
4. ບໍລິສັດ ຫຼື ນິຕິບຸກຄົນໃດທີ່ບໍ່ມີລາຍຊື່ໃນບັນຊີ ຕາມຂໍ້ທີ 2 ຂອງແຈ້ງການສະບັບນີ້ຕ້ອງຂຽນໃບສະເໜີຜ່ານຂະແໜງປູກຝັງ ແຂວງ ເຖິງກົມປູກຝັງ ພ້ອມທັງຄັດຕິດ ບົດລາຍງານມາດຕະການຄວບຄຸມແລະ ກໍາຈັດສັດຕູພືດ ທີ່ກໍາລັງປະຕິບັດຢູ່ຕົວຈິງຕາມແບບຮ່າງເອກະສານຊ້ອນທ້າຍ 2 ແລະ 3. ສ່ວນຄ່າໃຊ້ຈ່າຍຂອງເຈົ້າໜ້າທີ່ໃນການລົງກວດກາ ແລະ ວິໄຈຄວາມສ່ຽງສັດຕູພືດ ສໍາລັບການສົ່ງອອກ ແມ່ນເປັນພາລະຂອງຜູ້ປະກອບການຕາມລະບຽບການ.
5. ໃນກໍລະນີພາກສ່ວນໃດຕ້ອງການຂໍ້ມູນເພີ່ມເຕີມ ໃຫ້ຕິດຕໍ່ພົວພັນຫາກົມປູກຝັງໃນໂມງລັດຖະການ ໂທລະສັບ ແລະ ແຟັກ +856-21-452649 ຫຼື ອີເມລ pqdlao@yahoo.com

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມປູກຝັງ

ກະຊວງກະສິກໍາ... ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ບ່ອນສົ່ງ:

- ພະແນກກະສິກໍາ-ປ່າໄມ້ແຂວງ, ນະຄອນຫຼວງ 1 ສະບັບ (ເພື່ອຊຸກຍູ້ແລະຕິດຕາມ)
- ເກັບມ້ຽນ 1 ສະບັບ

ເອກະສານຊ້ອນທ້າຍ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------------------------

ແຂວງ...........................

ພະແນກກະສິກຳ ແລະ ປ່າໄມ້

ຂະແໜງປູກຝັງ

ຕາຕະລາງສັງລວມ ບໍລິສັດ/ຜູ້ສະເໜີ ຂໍເປີດຕະຫຼາດສົ່ງອອກ ໄປ ຍັງ ປະເທດ........................ ຂອງແຂວງ..........................................

| ລ/ດ | ຊື່ບໍລິສັດ | ທີ່ຢູ່ ບໍລິສັດ (ບ້ານ, ເມືອງ, ແຂວງ, ເບີໂທ/ແຟັກ) | ຊື່ພືດ ແລະ ສ່ວນຂອງພືດທີ່ຈະສົ່ງອອກ | ຈຳນວນ ຫຼື ນ້ຳໜັກລວມ | ທີ່ຢູ່ ແຫຼ່ງທີ່ມາຂອງພືດ (ເມືອງ, ແຂວງ) | ໂຮງອົບ/ໂຮງງານປຸງແຕ່ງ/ໂຮງງານບັນຈຸຫຸ້ມຫໍ່ | | ດ່ານສົ່ງອອກ(ລາວ) | ດ່ານນຳເຂົ້າ (ຫວຽດນາມ) | ໄລຍະເວລາສົ່ງອອກ ເລີ່ມ (ເດືອນ) ເຖິງ (ເດືອນ) | ມີບົດລາຍງານ ຈັດການຄວາມສ່ຽງ | |
|---|---|---|---|---|---|---|---|---|---|---|---|---|
| | | | | | | ມີ | ບໍ່ມີ | | | | ມີ | ບໍ່ມີ |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

ໝາຍເຫດ: ໃຫ້ນຳໃຊ້ແບບຮ່າງນີ້ພິມຂໍ້ມູນໃສ່ເຈ້ຍໃໝ່ໃຫ້ຈະແຈ້ງ

ຫົວໜ້າຂະແໜງປູກຝັງ ແຂວງ ................................

ຊື່ ແລະ ລາຍເຊັນ ຜູ້ສັງລວມ....................

ເບີໂທ.......................

ເອກະສານຊ້ອນທ້າຍ 2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ຊື່ບໍລິສັດ/ອົງການ.......................  ເລກທີ.........................

ທີ່ຢູ່: ບ້ານເລກທີ..........ໜ່ວຍ..........ຖະໜົນ.............  ລົງວັນທີ.........................

ບ້ານ...........ເມືອງ...........ແຂວງ..................

ເບີໂທລະສັບ/ແຟັກ.:...................ມືຖື:......................

ຮຽນ: ທ່ານຫົວໜ້າກົມປູກຝັງ

ໂດຍຜ່ານຂະແໜງປູກຝັງແຂວງ...................

ເລື່ອງ: ຂໍສະເໜີເປີດຕະຫຼາດສົ່ງອອກພືດຄວບຄຸມຈາກ ສປປ ລາວ ໄປຍັງ ປະເທດ ..........................

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ, ເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມດຳລັດ ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31/05/2012.
- ອີງຕາມແຈ້ງການ ຂອງ ກົມປູກຝັງ ເລກທີ....................ລົງວັນທີ............................

ຂ້າພະເຈົ້າຊື່...................................................ຂໍສະເໜີຂໍສົ່ງອອກພືດຕາມລາຍລະອຽດລຸ່ມນີ້:

1. *ຊື່ພືດ ພາສາລາວ :........................................ *ຊື່ພືດ ພາສາອັງກິດ ..................................................
2. ຊື່ວິທະຍາສາດ:........................................*ສ່ວນຂອງພືດທີ່ຈະສົ່ງອອກ:.............................................
3. ການບັນຈຸຫຸ້ມຫໍ່ ຈຳນວນ ......................ນ້ຳໜັກລວມ....................ລາຍການຫຸ້ມຫໍ່..............................
4. *ຈຳນວນ/ນ້ຳໜັກ ທີ່ຄາດຄະເນ ສົ່ງອອກ ລວມ/ປີ................................................ ...........................
5. ຈຸດປະສົງໃນການນຳໃຊ້ຢູ່ປາຍທາງ : ☐ ຈຳໜ່າຍ ☐ ປຸງແຕ່ງ ☐ ບໍລິໂພກ ອື່ນໆ............................
6. *ທີ່ຢູ່ແຫຼ່ງທີ່ມາຂອງພືດ (ສວນປູກ)ຢູ່ ສປປ ລາວ

| ລ/ດ | ບ້ານ | ເມືອງ | ແຂວງ | ເນື້ອທີ່ປູກ |
|---|---|---|---|---|
| | | | | |
| | | | | |
| | | | | |

7. *ທີ່ຢູ່ ໂຮງອົບ/ໂຮງານປຸງແຕ່ງ/ໂຮງງານບັນຈຸຫຸ້ມຫໍ່/ສາງເກັບມ້ຽນ ຢູ່ ສປປ ລາວ

| ລ/ດ | ບ້ານ | ເມືອງ | ແຂວງ | ປະເພດກິດຈະການໂຮງງານ** |
|---|---|---|---|---|
| | | | | |
| | | | | |

** ອົບແຫ້ງ/ປຸງແຕ່ງ/ຮົມຢາ/ບັນຈຸຫຸ້ມຫໍ່/ສາງເກັບມ້ຽນ/ອື່ນໆ ໃຫ້ຂຽນຕື່ມຖ້າມີ....

8. *ດ່ານ ສົ່ງອອກ (ລາວ):.................... ດ່ານນຳເຂົ້າ (ຫວຽດນາມ)................. ປະເທດສົ່ງຜ່ານ(ຖ້າມີ)............
9. ວິທີການຂົນສົ່ງ: ☐ ລົດ ☐ ເຮືອບິນ ☐ ໄປສະນີ ອື່ນໆ.......................................................
10. *ຊື່ ແລະ ທີ່ຢູ່ ຜູ້ນຳເຂົ້າ/ເຈົ້າຂອງສິນຄ້າ (ຫວຽດນາມ) ...............................................................
11. ທີ່ຢູ່ຈຸດນຳໃຊ້ປາຍທາງ (ຫວຽດນາມ) ຖ້າມີ: ບ້ານ...................ເມືອງ......................ແຂວງ............................ເບີໂທຕິດຕໍ່ ..............................ແຟັກ.....................ອີເມລ.....................................................
12. *ໄລຍະເວລາຂອງການສົ່ງອອກພືດ ແຕ່ເດືອນ........................ເຖິງເດືອນ.....................

ຂ້າພະເຈົ້າຂໍຢັ້ງຢືນ ວ່າຂໍ້ມູນທີ່ປະກອບມານີ້ ຖືກຕ້ອງຕາມຄວາມເປັນຈິງ.

ກວດກາ ແລະ ຢັ້ງຢືນໂດຍ

ຫົວໜ້າຂະແໜງປູກຝັງ ແຂວງ ..............................

ຊື່ ແລະ ລາຍເຊັນ ຜູ້ສະເໜີ

(ກາຈ້ຳບໍລິສັດ)

ໝາຍເຫດ: ໃຫ້ນຳໃຊ້ແບບຮ່າງນີ້ພິມຂໍ້ມູນໃສ່ເຈ້ຍໃໝ່ໃຫ້ຈະແຈ້ງ

*ຂໍ້ມູນທີ່ຈຳເປັນຕ້ອງສະໜອງໃຫ້

ເອກະສານຊ້ອນທ້າຍ 3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

## ບົດລາຍງານຂະບວນການຜະລິດ ແລະ ການຈັດການຄວາມສ່ຽງສັດຕູພືດສໍາລັບການສົ່ງອອກພືດ

1. ຂໍ້ມູນທົ່ວໄປຂອງຜູ້ສະເໜີ: ຊື່ບໍລິສັດ/ອົງການ……………………ຊື່ເຈົ້າຂອງ/ຜູ້ຕາງໜ້າບໍລິສັດ……………………ທີ່ຕັ້ງບໍລິສັດຖະໜົນ…………………..ເຮືອນເລກທີ…… …ໜ່ວຍ……….ບ້ານ……………….ເມືອງ…………………..ແຂວງ…………………….ເບີໂທ(ຫ້ອງການ)…………………… ມືຖື………… …………ເບີແຟັກ ……………………..ອີເມລ…………………….

2. **ຂໍ້ມູນກ່ຽວກັບ ການພືດ ແລະ ການປູກ**
   - 2.1. ຊື່ ວິທະຍາສາດ……………………….ຊື່ທົ່ວໄປ(ທ້ອງຖິ່ນ)ພາສາລາວ…………………..ຊື່ທົ່ວໄປພາສາອັງກິດ……………………
   - 2.2. ຊື່ແນວພັນທີ່ນໍາໃຊ້ ແລະ ລັກສະນະຄວາມຕ້ານທານ
   - 2.3. ຊະນິດພືດອື່ນໆ ທີ່ປູກຮ່ວມກັນ ຫຼື ຢູ່ສວນຕິດກັນ
   - 2.4. ວັນທີ ປູກ……………..ວັນທີເກັບກ່ຽວ………………… (ໃນກໍລະນີ ພືດປູກຄັ້ງດຽວຕໍ່ປີ)
   - 2.5. ຮອບວຽນການຜະລິດ/ຈໍານວນໃນການປູກ/ປີ ……………………ຄັ້ງ ຫຼື ຊຸດ (ໃນກໍລະນີ ພືດປູກຫຼາຍຄັ້ງຕໍ່ປີ)
   - 2.6. ສວນປູກໄດ້ຮັບການຢັ້ງຢືນມາດຕະຖານ(ຖ້າມີ) :☐ GAP ຫຼື ມາດຕະຖານອື່ນໆໃຫ້ຂຽນແຈ້ງ……………………

3. **ຂໍ້ມູນການປະຕິບັດຫຼັງການເກັບກ່ຽວ**

- ຂໍ້ມູນມາດຕະຖານ ຂອງຜົນຜະລິດ (ຖ້າມີ) ເຊັ່ນ ຂະໜາດ, ສີ, ການສຸກແກ່, ສິ່ງເຈືອປົນ ແລະ ປະລິມານທາດເບື້ອຕໍ່າສຸດ ແລະ ອື່ນໆ…….
- ອະທິບາຍຂັ້ນຕອນການປະຕິບັດເບື້ອງຕົ້ນ (ຖ້າມີ) ເຊັ່ນ ການອະນາໄມ ແລະ ຄັດແຍກຜົນຜະລິດທີ່ບໍ່ໄດ້ມາດຕະຖານ, ການລ້າງ ແລະ ການປະຕິບັດອື່ນໆ… ……………………………………………………………………………
- ອະທິບາຍ ຂັ້ນຕອນການປຸງແຕ່ງຂັ້ນຕົ້ນ (ຖ້າມີ) ເຊັ່ນ ການສີ, ເປົ່າຄັດແຍກສິ່ງເຈືອປົນ, ການແກະເປືອກ, ການຊອຍ, ການບົດ, ການອົບ ຫຼື ຕາກແຫ້ງ…………………………(ໃຫ້ຄັດຕິດ ແຜນວາດວົງຈອນຂັ້ນຕອນການຈັດການຫຼັງການເກັບກ່ຽວ)
- ການປ້ອງກັນສິນຄ້າຕິດແປດສັດຕູພືດໃນລະຫວ່າງ ການປຸງແຕ່ງ ແລະ ກ່ອນການສົ່ງອອກ(ການແຊ່ນ້ຳຢາ, ການຮົມຢາ, ການຄັດແຍກພືດ, ມາດຕະການປ້ອງກັນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສິນຄ້າ ແລະ ອື່ນໆ…)…………………………………………
- ວິທີການຫຸ້ມຫໍ່ ແລະ ຂົນສົ່ງ (ໃຫ້ອະທິບາຍ) …………………………………… ……………………………………………
- ການບັນທຶກ ແລະ ໃຫ້ເລກລະຫັດແຫຼ່ງທີ່ມາ ຂອງຜະລິດຕະພັນພືດ (ຖ້າມີ) ……………………………………………………
- ໂຮງການບັນຈຸຫຸ້ມຫໍ່ ຫຼື ປຸງແຕ່ງໄດ້ຮັບການຢັ້ງຢືນມາດຕະຖານ(ຖ້າມີ): ☐GMP ຫຼື ມາດຕະຖານອື່ນໆໃຫ້ຂຽນແຈ້ງ…………………

4. **ຂໍ້ມູນຂອງແຕ່ລະສັດຕູພືດ ທີ່ເກີດຂຶ້ນໃນຂະບວນການຜະລິດ ແຕ່ປູກ ຈົນເຖິງ ເກັບຮັກສາກ່ອນສົ່ງອອກ**

| ລ/ດ | ຊື່ວິທະຍາສາດ/ ຊື່ສາມັນ | ປະເພດສັດຕູພືດ * | ສ່ວນຂອງພືດທີ່ຖືກທໍາລາຍ | ໄລຍະການຈະເລີນຂອງພືດທີ່ຖືກທໍາລາຍ (ຕົ້ນອ່ອນ,ຂະຫຍາຍຕົວ,ໃຫ້ຜົນຜະລິດ,ຫຼັງເກັບກ່ຽວ) | ວິທີການກວດກາຕິດຕາມ ສະພາບສັດຕູພືດ | ມາດຕະການປ້ອງກັນ ແລະ ກໍາຈັດສັດຕູພືດ |
|---|---|---|---|---|---|---|
| 1 | | | | | | |
| … | | | | | | |

*ແມງໄມ້, ເຊື້ອຣາ, ແບກທີເຣຍ, ຂີ້ກະເດືອນຝອຍ, ຫຍ້າ ແລະ ສັດຮາວີອື່ນໆ

5. ປະຫວັດການສົ່ງອອກພືດຊະນິດດຽວກັນ ໄປປະເທດອື່ນໆ

| ລ/ດ | ຊື່ປະເທດນໍາເຂົ້າ | ປີສົ່ງອອກ | ປະລິມານພືດທີ່ສົ່ງອອກ, | ຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ |
|---|---|---|---|---|
| | | | | |

6. ເອກະສານຄັດຕິດ:
   - ສັນຍາ ຊື້ຂາຍ ກັບຄູ່ການຄ້າປະເທດນໍາເຂົ້າຫຼືບົດບັນທຶກການຮ່ວມມື ລະຫວ່າງອົງການ (ຖ້າມີ)
   - ຂໍ້ມູນລັກສະນະພັນ ຫຼື ໃບທະບຽນແນວພັນ, ປະຕິທິນການປູກ ສໍາລັບແຕ່ລະຊຸດ
   - ແຜນວາດເລກລະຫັດສວນປູກ (ຖ້າມີຫຼາຍແຫຼ່ງທີ່ມາ) ແລະ ແຜນວາດທີ່ຕັ້ງຂອງແຕ່ລະສວນປູກ
   - ໃບຢັ້ງຢືນມາດຕະຖານ ການຜະລິດ ເຊັ່ນ GAP, GMP, ISO ແລະ ອື່ນໆ(ຖ້າມີ)
   - ໃບດໍາເນີນທຸລະກິດກະສິກໍາ ແລະ ປ່າໄມ້ (ຖ້າມີ)
   - ໃບທະບຽນເຕັກນິກການດໍາເນີນທຸລະກິດສຸຂານາໄມພືດ (ການຮົມຢາ) (ຖ້າມີ)

ກວດກາ ແລະ ຢັ້ງຢືນໂດຍ

ຫົວໜ້າຂະແໜງປູກຝັງ ແຂວງ ……………………………

ຊື່ ແລະ ລາຍເຊັນ ຜູ້ສະເໜີ

(ກາຈໍ້າບໍລິສັດ/ອົງການ)